# ເຝົ້າຮັກສາລີງຂົນຄຳຢຸນນານ









ເຂດສະຫງວນທຳມະຊາດແຫ່ງຊາດພູຫິມະປາຍມາ ຕັ້ງຢູ່ໃຈກາງຂອງເຂດມໍລະດົກທຳມະຊາດໂລກ “ແມ່ນ້ຳ 3 ສາຍໄຫຼຕາມທິດງຽວດກັນ” ແລະ ມີລີງຂົນຄຳຢຸນນານປະມານ 60% ໄດ້ພັກອາໄສຢູ່ແຫ່ງນີ້. ປັດຈຸບັນ, ມີຜູ້ປ້ອງກັນປ່າໄມ້ ແລະ ນັກຄົ້ນຄວ້າວິທະຍາສາດຊຸດໜຶ່ງໄດ້ເຝົ້າຮັກສາ “ພູຫິມະສັກສິດ” ເຫຼົ່ານີ້. ພວກເພິ່ນ ໄດ້ລາດຕະເວນຕາມພູຫິມະ ເພື່ອເບິ່ງແຍງດູແລ “ພູຫິມະສັກສິດ” ເຫຼົ່ານີ້.

ລີງຂົນຄຳຢຸນນານ ເປັນລີງທີ່ມີສະເພາະຢູ່ຈີນ, ຊຶ່ງດຳລົງຊີວິດຢູ່ເຂດພູດອຍສູງທີ່ມີອາກາດໜາວ ແລະ ສູງຈາກລະດັບໜ້ານ້ຳທະເລ 3.000 ແມັດຂຶ້ນໄປ ຢູ່ເຂດລະຫວ່າງແຂວງເສສວນ, ແຂວງຢຸນນານ ແລະ ເຂດປົກຄອງຕົນເອງ ຊີຈ້າງຂອງຈີນ. ເຂດສຽງກູຈິງ ທີ່ຕັ້ງຢູ່ໃນຂອບເຂດເຂດສະຫງວນທຳມະຊາດແຫ່ງຊາດພູຫິມະປາຍມາຢຸນນານ, ມີລີງຂົນຄຳຢຸນນານຈຳນວນ 60 ກວ່າໂຕ ໃນ 10 “ຄອບຄົວ” ດຳລົງຊີວິດຢູ່ແຫ່ງນີ້ ຊຶ່ງເປັນເຂດທີ່ສາມາດໃຫ້ຄົນທັງຫຼາຍ ຕິດຕາມສັງເກດລີງຂົນຄຳຢຸນນານ ຈາກທາງໃກ້ພຽງແຫ່ງດຽວໃນໂລກເທົ່ານັ້ນ.

ເພາະວ່າໄດ້ພົບກັນທຸກມື້, ເຈົ້າໜ້າທີ່ລາດຕະເວນ ໄດ້ສ້າງສາຍພົວພັນພິເສດກັບລີງຂົນຄຳຢຸນນານເຫຼົ່ານີ້: ຂໍພຽງແຕ່ເຈົ້າໜ້າທີ່ເຫຼົ່ານີ້ ຮ້ອງໂຮຂຶ້ນມາ, ລີງຂົນຄຳ ຈຶ່ງປະກົດຕົວອອກຈາກປ່າໄມ້ຕຶບໜາ ເຮັດໃຫ້ນັກທ່ອງທ່ຽວຮູ້ສຶກໜ້າງຶດງໍ້ທີ່ສຸດ.

ຕອນຮຸ່ງເຊົ້າ, ທ່ານ ຢູຈ້ຽນຮວາ (Yu Jianhua) ຜູ້ເຝົ້າຮັກສາລີງຂົນຄຳ ທີ່ມີອາຍຸ 72 ປີ ກໍໄດ້ອອກເດີນທາງເຂົ້າປ່າ ເພື່ອຊອກຫາສະຖານທີ່ຂອງຝູງລີງ, ຕິດຕາມຝູງລີງ ໝົດມື້ ແລ້ວຈຶ່ງກັບເມືອ.

ທ່ານ ຢູຈ້ຽນຮວາ ກ່າວວ່າ: “ພວກເຮົາ ຕື່ນກ່ອນລີງ ແລະ ນອນຫຼັງລີງ”. ໜ່ວຍເຝົ້າຮັກສາລີງເຂດນີ້ແບ່ງເປັນ 2 ຈຸ, ຈຸໜຶ່ງ 10 ຄົນ, ແຕ່ລະຈຸຮັບຜິດຊອບ ເຝົ້າເປັນມື້ໜຶ່ງ ແລະ ຕ້ອງເພີ່ມອາຫານການກິນໃຫ້ແກ່ລີງ. ເມື່ອພົບນັກທ່ອງທ່ຽວ ຫຼື ນັກຄົ້ນຄວ້າວິທະຍາສາດເຂົ້າມາ, ພວກເພິ່ນ ສາມາດນຳພາຄົນທັງຫຼາຍເຂົ້າໄປເບິ່ງຝູງລີງໄດ້.

ທ່ານ ຢູຈ້ຽນຮວາ ເປັນຜູ້ເຝົ້າຮັກສາລີງຂອງເຂດສຽງກູຈິງ ໃນເຂດສະຫງວນທຳມະຊາດແຫ່ງຊາດ ພູຫິມະປາຍມາ. ພາຍຫຼັງເຂດສະຫງວນແຫ່ງນີ້ໄດ້ຮັບການສ້າງຕັ້ງຂຶ້ນເມື່ອປີ 1983, ທ່ານ ກໍໄດ້ເຂົ້າເປັນສະມາຊິກຂອງໜ່ວຍເຝົ້າຮັກສາລີງ. ເວລາ 6 ໂມງເຊົ້າ ຫາ 8 ໂມງແລງທຸກມື້, ທ່ານ ລ້ວນແຕ່ໄດ້ເຝົ້າຮັກສາຝູງລີງ ໃນເຂດສຽງກູຈິງ. ມາຮອດປັດຈຸບັນ, ທ່ານໄດ້ເຝົ້າຮັກສາຝູງລີງເປັນເວລາ 28 ປີແລ້ວ.

ທ່ານ ຢູຈ້ຽນຮວາ ທັງຍິ້ມທັງເວົ້າວ່າ: “ປັດຈຸບັນ, ຖ້າຂ້ອຍບໍ່ໄດ້ເບິ່ງຝູງລີງມື້ໜຶ່ງ, ຂ້ອຍກໍຄິດຮອດຫຼາຍ.” ເຈົ້າໜ້າທີ່ເຂດສະຫງວນທຳມະຊາດ ກໍໄດ້ຮັກແພງຝູງລີງຫຼາຍ, ທ່ານ ເຫີຊິນມິງ (He Xinming) ອະດີດຫົວໜ້າສະຖານີຊ່ວຍເຫຼືອສັດປ່າ ເຂດສະຫງວນທຳມະຊາດແຫ່ງຊາດພູຫິມະປາຍມາ ໄດ້ຕັ້ງຊື່ໃຫ້ລີງທຸກໂຕ: “ຈິວເກີ່”, “ເມັດເຂົ້າ” “ໜ້າຂາວ” “ແຕ້ມແດງ” ເຫຼົ່ານີ້ເປັນຕົ້ນ. ໂດຍໄດ້ຮັບຜົນສະທ້ອນຈາກ ທ່ານ ຢູຈ້ຽນຮວາ, ທ່ານ ຢູຈົ້ງຮວາ (Yu Zhonghua) ລູກຊາຍຂອງທ່ານ ຢູຈ້ຽນຮວາ ກໍໄດ້ດຳເນີນວຽກງານລາດຕະເວນຢູ່ເຂດສະຫງວນທຳມະຊາດແຫ່ງຊາດພູຫິມະປາຍມາ ເປັນເວລາເກືອບ 17 ປີ ລ້ວນແຕ່ຮູ້ດີກັບວຽກງານປ້ອງກັນລີງຂົນຄຳເຊັ່ນກັນ.

ລີງຂົນຄຳຢຸນນານ ທີ່ມີໃບໜ້າຄ້າຍຄືມະນຸດ ເປັນສັດສະຫງວນລະດັບ 1 ລະດັບຊາດຂອງຈີນ ແລະ ກໍເປັນສັດປະເພດໃກ້ຈະສູນພັນ ໃນບັນຊີລາຍຊື່ສີແດງ ຂອງສະຫະພັນປົກປ້ອງທຳມະຊາດໂລກ ຫຼື IUCN. ການສ້າງໜ່ວຍງານ ເຝົ້າຮັກສາລີງຂົນຄຳຢຸນນານ ແມ່ນໜຶ່ງໃນມາດຕະການໃນການປົກປ້ອງລີງຂົນຄຳຢຸນນານຂອງເຂດສະຫງວນທຳມະຊາດແຫ່ງຊາດພູຫິມະປາຍມາ.

ຢູ່ເຂດສຽງກູຈິງ, ເຮືອນໄມ້ແບບດັ້ງເດີມຫຼັງໜຶ່ງ ເປັນຫ້ອງຕິດຕາມຄວບຄຸມການສັງເກດລີງ. ທ່ານ ລ້າຍຈ້ຽນຕົ່ງ ຫົວໜ້າສະຖານີຊ່ວຍເຫຼືອສັດປ່າເຂດສະຫງວນທຳມະຊາດແຫ່ງຊາດພູຫິມະປາຍມາ ກ່າວວ່າ: ເຂດສະຫງວນທຳມະຊາດແຫ່ງນີ້ ແມ່ນເຂດສະຫງວນທຳມະຊາດ ແຫ່ງຊາດຝູງລີງຂົນຄຳຢຸນນານ ທີ່ມີເນື້ອທີ່ໃຫຍ່ທີ່ສຸດຂອງຈີນ. ປີ 2019, ແຂວງຢຸນນານ ໄດ້ສ້າງເຄືອຂ່າຍປົກປ້ອງລີງຂົນຄຳຢຸນນານໃນຂອບເຂດທົ່ວແຂວງຢຸນນານ, ເຂດສະຫງວນທຳມະຊາດແຫ່ງຊາດພູຫິມະປາຍມາ ໄດ້ດຳເນີນວຽກງານຕິດຕາມຝູງລີງຂົນຄຳຢຸນນານ, ການລາດຕະເວນ, ການບົວລະບັດຮັກສາສະຖານທີ່ພັກເຊົາຂອງລີງ, ການປົກປ້ອງຢູ່ຕາມເຂດຊຸມຊົນ, ການສຶກສາທຳມະຊາດ ແລະ ອື່ນໆ.

ທ່ານ ລ້າຍຈ້ຽນຕົ່ງ (Lai Jiandong) ກ່າວຕື່ມວ່າ: “ພວກເຮົາ ຍັງໄດ້ນຳໃຊ້ກ້ອງຖ່າຍອິນຟຣາເຣດ, ເຮືອບິນບໍ່ມີຄົນຂັບ, ເຕັກນິກບັນຊາທາງໄກ ແລະ ເຕັກນິກອື່ນໆ ເພື່ອຄຸ້ມຄອງ ປົກປ້ອງລີງຂົນຄຳຢຸນນານ, ໄດ້ຄົ້ນຄວ້າ ແລະ ນຳໃຊ້ເຕັກນິກຈຳແນກໃບໜ້າຂອງລີງຢ່າງອັດຕະໂນມັດ ແລະ ເຕັກນິກຕິດຕາມລີງຢ່າງອັດຕະໂນມັດ ຊຶ່ງໄດ້ບັນລຸການຕິດຕາມຝູງລີງຂົນຄຳຢຸນນານ ໃນທຸກເວລາ.”ພາຍໃຕ້ຄວາມພະຍາຍາມຮ່ວມຂອງວົງການຕ່າງໆໃນສັງຄົມ, ເຂດສະຫງວນທຳມະຊາດແຫ່ງຊາດພູຫິມະປາຍມາໄດ້ກາຍເປັນສວນສະໜຸກຂອງລີງຂົນຄຳຢຸນນານ.

ຕາມສະຖິຕິເບື້ອງຕົ້ນ, ຈຳນວນລີງຂົນຄຳຢຸນນານ ໃນເຂດສະຫງວນທຳມະຊາດ ແຫ່ງຊາດພູຫິມະປາຍມາ ໄດ້ເພີ່ມຈາກປະມານ 540 ໂຕ ຈຳນວນ 7 ຝູງໃນປີ 1985, ເປັນປະມານ 2.500 ໂຕ ຈຳນວນ 14 ຝູງ ໃນປັດຈຸບັນ ກວມ 65% ຂອງຍອດຈຳນວນລີງຂົນຄຳຢຸນນານໃນທົ່ວປະເທດຈີນ.

ແຫຼ່ງຂ່າວ: ສຳນັກຂ່າວຊິນຮວາ, ໜັງສືພິມປະຊາຊົນລາຍວັນ ຈີນ ແລະ ອື່ນໆ




**ເນື້ອໃນເພີ່ມເຕີມ:**

“ແມ່ນ້ຳ 3 ສາຍໄຫຼຕາມທິດດຽວກັນ” ແມ່ນແມ່ນ້ຳໃຫຍ່ 3 ສາຍ ທີ່ມີແຫຼ່ງກຳເນີດຢູ່ພູພຽງຊິງໄຮ-ຊີຈ້າງ ຄື: ແມ່ນ້ຳຈິ່ນຊາຈຽງ, ແມ່ນ້ຳລ້ານຊ້າງ ແລະ ແມ່ນ້ຳນູ້ຈຽງ ໄດ້ໄຫຼຈາກທິດເໜືອໄປຫາທິດໃຕ້ ເປັນໄລຍະທາງ 170 ກວ່າກິໂລແມັດ ຢູ່ໃນແຂວງຢຸນນານ, ໄດ້ໄຫຼຜ່ານພູຜາສູງຊັນຫຼາຍໜ່ວຍ ແລະ ກາຍເປັນ ພາບທຳມະຊາດພິເສດ ທີ່ “ໄຫຼຕາມທິດດຽວກັນ, ແຕ່ຫາກບໍ່ໄດ້ຮ່ວມກັນແມ່ນ້ຳສາຍດຽວກັນ”.ພາບທຳມະຊາດທີ່ “ແມ່ນ້ຳ 3 ສາຍໄຫຼຕາມທິດດຽວກັນ” ໄດ້ໂຮມສູນພາບວິວທິວທັດທຳມະຊາດຕ່າງໆ ເຊັ່ນ: ຮ່ອມພູສູງ, ລານນ້ຳກ້າມ, ເຂດດິນທາມ, ເຂດພູດອຍ, ທົ່ງຫຍ້າໃນປ່າໄມ້, ໜອງນ້ຳຈືດ ແລະ ອື່ນໆ, ມີຈຳນວນພືດລະດັບເກດດີ 20% ຂຶ້ນໄປ ແລະ ຈຳນວນສັດ 25% ຂຶ້ນໄປຂອງຈີນ ໄດ້ດຳລົງຊີວິດຢູ່ເຂດນີ້.

ວັນທີ 2 ກໍລະກົດ 2003, ພາບທຳມະຊາດ “ແມ່ນ້ຳ 3 ສາຍໄຫຼຕາມທິດດຽວກັນ” ຖືກຈັດເຂົ້າໃນບັນຊີລາຍຊື່ມໍລະດົກໂລກ ຊຶ່ງປະກອບດ້ວຍ 8 ເຂດ ທີ່ຕິດຈອດກັນ ເຊັ່ນ: ເຂດພູກາວຫຼີກົ້ງຊານ, ເຂດພູຫິມະປາຍມາ-ເໝີຍຫຼີ, ເຂດພູຫິມະຮາບາ ແລະ ເຂດພູຫຼາວຈຸ່ນຊານ ເປັນຕົ້ນ ຊຶ່ງມີເນື້ອທີ່ທັງໝົດ 17.700 ກິໂລຕາແມັດ.

ແຫຼ່ງຂ່າວ: ໜັງສືພິມລາຍວັນຢຸນນານ, ໜັງສືພິມລາຍວັນ ກວາງໝິງ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)